# ວິທີການສະໝັກຂໍທຶນ

01 ຜູ້ສະໝັກສົ່ງ/ຍື່ນບົດສະເໜີແນວຄວາມຄິດຕາມແບບຟອມສະໝັກຂໍທຶນໃນໜັງສືປະກາດ (EOI) ສົ່ງຜ່ານອີເມວ LBEPF@ibi-worldwide.com

02 ໂຄງການປະເມີນໃບສະໝັກຂໍທຶນທີ່ໄດ້ຮັບ

03 ໂຄງການດຳເນີນການກວດຄວາມຖືກຕ້ອງ

04 ເຊີນຄູ່ຮ່ວມງານທີ່ຖືກຄັດເລືອກເຂົ້າຮ່ວມການອອກແບບກິດຈະກຳ

05 ສ້າງສັນຍາຮ່ວມມືໃຫ້ຜູ້ຖືກຄັດເລືອກໂດຍອີງໃສ່ຜົນຂອງກອງປະຊຸມການອອກແບບກິດຈະກຳ

06 ໂຄງການຂໍອະນຸມັດຈາກຜູ້ໃຫ້ທຶນ

07 ສະໜອງທຶນ

**ສຳລັບຂໍ້ມູນເພີ່ມເຕີມ ສາມາດຕິດຕໍ່:**

ຜູ້ຮັບຜິດຊອບທຶນແບບມີສ່ວນຮ່ວມ
ໂຄງການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ທຸລະກິດລາວ
ອີເມວ: LBEPF@ibi-worldwide.com
ໂທ: +856-21330728

ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ
ກສວ DOSMEP
Department of SME Promotion

USAID
FROM THE AMERICAN PEOPLE



# ທຶນແບບມີສ່ວນຮ່ວມ ໃນການສ້າງລະບົບນິເວດ ທີ່ເອື້ອອຳນວຍຕໍ່ທຸລະກິດລາວ (LBEPF)




# ຄວາມເປັນມາ

ໂຄງການສ້າງສະພາບແວດລ້ອມທີ່ເອື້ອອໍານວຍຕໍ່ທຸລະກິດລາວ ມີເປົ້າໝາຍໃນການສ້າງຄວາມເຂັ້ມແຂງໃນການອໍານວຍຄວາມສະດວກ ແລະ ສືບຕໍ່ປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍໃນການດໍາເນີນທຸລະກິດຂອງ ສປປ ລາວ ແລະ ເສີມສ້າງຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ (SME) ໃຫ້ສູງຂຶ້ນ. ວິທີການດັ່ງກ່າວ ຈະອໍານວຍຄວາມສະດວກໃຫ້ SME ສາມາດປະກອບສ່ວນເຂົ້າໃນການສົ່ງເສີມ ແລະ ກະຕຸ້ນເສດຖະກິດຂອງປະເທດໃຫ້ມີການຂະຫຍາຍຕົວ, ເພີ່ມການຈ້າງງານ, ແລະ ສ້າງລາຍຮັບໃຫ້ແກ່ພົນລະເມືອງລາວ. ທຸລະກິດທີ່ມີຄວາມສາມາດໃນການແຂ່ງຂັນສູງຈະຊຸກຍູ້ລັດຖະບານໃຫ້ປັບປຸງ ແລະ ເສີມສ້າງລະບົບນິເວດທີ່ເອື້ອອໍານວຍຕໍ່ທຸລະກິດໃຫ້ຫຼາຍຂຶ້ນ ເພື່ອກະຕຸ້ນນະວັດຕະກໍາໃໝ່ ແລະ ມີການຂະຫຍາຍຕົວຕໍ່ໄປ.

**ໂຄງການປະກອບດ້ວຍສາມອົງປະກອບຫລັກຄື:**

ອົງປະກອບທີ 1: ປັບປຸງຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ.
ອົງປະກອບທີ 2: ປັບປຸງການຮ່ວມມືລະຫວ່າງພາກລັດ ແລະ ພາກທຸລະກິດ.
ອົງປະກອບທີ 3: ການອໍານວຍຄວາມສະດວກຕໍ່ລະບົບເສດຖະກິດຕະຫຼາດມີປະສິດທິພາບຂຶ້ນ.

ໜຶ່ງໃນກິດຈະກໍາທີ່ສໍາຄັນຂອງອົງປະກອບທີ 1 ແມ່ນການສ້າງກົນໄກການຮ່ວມມື – ໂດຍແມ່ນທຶນແບບມີສ່ວນຮ່ວມໃນການສ້າງລະບົບນິເວດທີ່ເອື້ອອໍານວຍຕໍ່ທຸລະກິດລາວ ຫຼື LBEPF – ທີ່ຈະຊ່ວຍສົ່ງເສີມການມີສ່ວນຮ່ວມຂອງບັນດາອົງກອນຕ່າງໆທີ່ມີເງື່ອນໄຂ ໃນ 2 ແຂວງເປົ້າໝາຍຂອງໂຄງການເຊັ່ນ – ນະຄອນຫຼວງວຽງຈັນ ແລະ ແຂວງຈໍາປາສັກ – ໃນຂະແໜງການ ເຊັ່ນ: ຂະແໜງຂໍ້ມູນຂ່າວສານ ແລະ ເຕັກໂນໂລຍີການສື່ສານ, ຂະແໜງທ່ອງທ່ຽວ ແລະ ຂະແໜງຫັດຖະກໍາ. ອົງກອນທີ່ມີເງື່ອນໄຂ ລວມມີບັນດາຜູ້ສະໜອງການບໍລິການທີ່ຊ່ວຍສະໜັບສະໜູນ SME ໃຫ້ມີການຂະຫຍາຍ ຫຼື ຍົກລະດັບ ເຊັ່ນ: ສະມາຄົມ, ຜູ້ສະໜອງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ, ໂຮງຮຽນເຕັກນິກວິຊາຊີບ, ສະຫະກອນ, ຜູ້ສະໜອງ ແລະ ອື່ນໆ. ທຶນ LBEPF ຈະນໍາໃຊ້ວິທີການອອກແບບກິດຈະກໍາຮ່ວມກັບບັນດາຜູ້ໃຫ້ບໍລິການສະໜັບສະໜູນ SME ທີ່ມີເງື່ອນໄຂ ເພື່ອຮ່ວມກັນອອກແບບວິທີການທີ່ສາມາດແກ້ໄຂຂໍ້ຈໍາກັດຂອງສະຖາບັນ ຫຼື ລະບົບນິເວດທີ່ກີດຂວາງຄວາມສາມາດໃນການແຂ່ງຂັນຂອງ SME ແລະ ເພື່ອສົ່ງເສີມການຮ່ວມມືທີ່ມີຄວາມເປັນເຈົ້າການຮ່ວມກັນໃນການປະຕິບັດກິດຈະກໍາຕ່າງໆທີ່ກໍານົດໄວ້.

## ຈຸດປະສົງ

- ທຶນ LBEPF ມີເປົ້າໝາຍທີ່ຈະສະໜັບສະໜູນ ຜູ້ສະໜອງການບໍລິການໃຫ້, ຄໍາປຶກສາພັດທະນາທຸລະກິດ ຫຼື BDS ເພື່ອຊ່ວຍ SME ໃນການເພີ່ມການສົ່ງອອກສິນຄ້າ ແລະ ເພີ່ມຍອດຂາຍພາຍໃນປະເທດ ພ້ອມທັງປັບປຸງການບໍລິຫານຈັດການ, ການນໍາໃຊ້ເຕັກໂນໂລຍີ ແລະ ການສະໜອງການບໍລິການ.
- ທຶນ LBEPF ແມ່ນຈະຊ່ວຍສະໜັບສະໜູນ SME ໃຫ້ມີການຂະຫຍາຍ ຫຼື ຍົກລະດັບທຸລະກິດໃຫ້ສາມາດແຂ່ງຂັນໄດ້ຢ່າງມີປະສິດທິພາບ ໃນຕະຫຼາດພາຍໃນ, ພາກພື້ນ ແລະ ສາກົນ.

## ການຊອກຫາຄູ່ຮ່ວມງານ

ໂຄງການແມ່ນຊອກຫາບົດສະເໜີແນວຄວາມຄິດຈາກຄູ່ຮ່ວມງານທີ່ມີແນວຄວາມຄິດທີ່ສອດຄ່ອງກັບຈຸດປະສົງລວມຂອງໂຄງການເພື່ອເສີມສ້າງຄວາມສາມາດໃນການແຂ່ງຂັນຂອງ SME. ຜູ້ສະໝັກຕ້ອງອະທິບາຍຢ່າງຊັດເຈນວ່າກິດຈະກໍາທີ່ ສະເໜີຈະປະກອບສ່ວນແນວໃດເຂົ້າໃນການບັນລຸຈຸດປະສົງຂອງ ໂຄງການ.

ໂຄງການແມ່ນຊອກຫາຄູ່ຮ່ວມງານທີ່ມີເງື່ອນໄຂໃນ 2 ແຂວງເປົ້າໝາຍຂອງໂຄງການເຊັ່ນ: ນະຄອນຫຼວງວຽງຈັນ ແລະ ແຂວງຈໍາປາສັກ ທີ່ໃຫ້ບໍລິການແກ່ SME ໃນການປັບປຸງຄວາມສາມາດ ແລະ ທັກສະ.

### ພາກສ່ວນທີ່ມີເງື່ອນໄຂການສະໝັກຂໍທຶນ

- SME ທີ່ເປັນຜູ້ສະໜອງການບໍລິການໃຫ້ຄໍາປຶກສາພັດທະນາທຸລະກິດ ຫຼື BDS (ເຊິ່ງອາດລວມເອົາພາກສ່ວນຕ່າງໆລຸ່ມນີ້)
- ສະມາຄົມ
- ສະຫະກອນ
- ອົງການຈັດຕັ້ງຊຸມຊົນ
- ວິທະຍາໄລ/ໂຮງຮຽນເຕັກນິກວິຊາຊີບ
- ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ
- ຜູ້ສະໜອງ

## ປະເພດກິດຈະກໍາທີ່ຈະໄດ້ຮັບການພິຈາລະນາ

- ກິດຈະກໍາປັບປຸງດ້ານວິຊາການ ແລະ ຄວາມຊໍານານ
- ກິດຈະກໍາປັບປຸງດ້ານວິຊາການ ແລະ ຄວາມຊໍານານໃນການສ້າງຜະລິດຕະພັນໃໝ່
- ກິດຈະກໍາປັບປຸງດ້ານວິຊາການ ແລະ ຄວາມຊໍານານດ້ານການບໍລິການ
- ການປັບປຸງ/ສ້າງເວັບໄຊທ, ສື່ການຄ້າທາງເອເລັກໂຕຼນິກ
- ການວິເຄາະຕະຫຼາດ
- ການປັບປຸງ/ສ້າງຍຸດທະສາດການດໍາເນີນທຸລະກິດ/ແຜນທຸລະກິດ
- ການເຂົ້າເຖິງແຫຼ່ງທຶນໃໝ່ (ໜີ້ສິນ ຫຼື ທຶນ)
- ການປັບປຸງ/ສ້າງສື່ການຕະຫຼາດ ແລະ ໂຄສະນາ
- ທີ່ປຶກສາໃຫ້ຄໍາແນະນໍາໃນການດໍາເນີນທຸລະກິດ (ທີ່ປຶກສາທາງດ້ານການເງິນ)
- ການສະໜັບສະໜູນ, ປະກອບສ່ວນການຈັດຊື້ອຸປະກອນ, ຊອບແວ ເຊັ່ນ: ອຸປະກອນໄອທີ, ອຸປະກອນດິຈິຕອນ, ເຄື່ອງມື ແລະ ອຸປະກອນເສີມທີ່ໃຊ້ສໍາລັບການທ່ອງທ່ຽວ, ໂປຣແກມການບໍລິຫານບັນຊີ ແລະ ການເງິນ, ແລະ ໂປຣແກມອື່ນໆ, ການບໍລິການປັບປຸງເວັບໄຊທ ແລະ ຊອບແວ
- ການຈັດທັດສະນະສຶກສາ ເພື່ອສຶກສາຕະຫຼາດໃໝ່, ການປະຊຸມປຶກສາຫາລືທາງທຸລະກິດ (ໝາຍເຫດ: ຈະມີການຈໍາກັດການເດີນທາງອອກນອກປະເທດ ເຊິ່ງຖ້າມີຈະຕ້ອງໄດ້ຮັບອະນຸມັດເປັນກໍລະນີພິເສດ)
- ການຈັດງານວາງສະແດງສິນຄ້າ, ກອງປະຊຸມການລົງທຶນ
- ການສະໜັບສະໜູນທຶນໃນການພັດທະນາ, ການທົດລອງ, ການສາທິດຜະລິດຕະພັນ ຫຼື ການບໍລິການໃໝ່

## ເງື່ອນໄຂໃນການສະໝັກຂໍທຶນ

- ມີປະສົບການ ແລະ ຄວາມສາມາດ ທີ່ສອດຄ່ອງກັບຈຸດປະສົງຂອງໂຄງການ.
- ກິດຈະກໍາທີ່ສະເໜີຕ້ອງຢູ່ໃນຂະແໜງບູລິມະສິດ ແລະ ແຂວງເປົ້າໝາຍຂອງໂຄງການ
- ມີນະໂຍບາຍ, ກິດຈະກໍາທີ່ຈະສ້າງ, ມີສາຍພົວພັນທີ່ດີກັບຄູ່ຮ່ວມງານ ແລະ ມີຄວາມພະຍາຍາມໃນການສ້າງ, ຮັກສາ, ແລະ ສົ່ງເສີມຄວາມສະເໝີພາບ ແລະ ການມີສ່ວນຮ່ວມ.
- ມີສະພາບຄ່ອງທາງດ້ານການເງິນທີ່ດີ.
- ມີປະຫວັດການເຄື່ອນໄຫວວຽກງານຢ່າງໜ້ອຍ 2 ປີ (ໂຄງການຈະມີຂໍ້ຍົກເວັ້ນເປັນແຕ່ລະກໍລະນີ ສໍາລັບທຸລະກິດສະຕາດອັບ, ສະມາຄົມ, ສະຫະກອນ, ອົງການຈັດຕັ້ງຊຸມຊົນ ແລະ ແນວຄວາມຄິດປະດິດສ້າງໃໝ່).
- ມີພະນັກງານປະຈໍາ ຢ່າງໜ້ອຍ 5 ຄົນ (ໂຄງການຈະມີຂໍ້ຍົກເວັ້ນ ເປັນແຕ່ກໍລະ ນີ ສໍາລັບທຸລະກິດສະຕາດອັບ, ສະມາຄົມ, ສະຫະກອນ, ອົງການຈັດຕັ້ງຊຸມຊົນ, ແລະ ແນວຄິດປະດິດສ້າງໃໝ່)
- ຈົດທະບຽນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ (ຍົກເວັ້ນທຸລະກິດສະຕາດອັບຕາມທີ່ລະບຸຂ້າງເທິງ)
- ມີເປົ້າໝາຍຊ່ວຍເຫຼືອ SME ຕາມຈຸດປະສົງຫຼັກຂອງທຶນແບບມີສ່ວນຮ່ວມ.

### ຂະໜາດຂອງທຶນ

- ຕໍ່າສຸດ USD 10,000
- ສູງສຸດ USD 75,000.

